# ແຜນກາສອນ
# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 5 ພະຈິກ ໒006 (11-05-໒006)

---

## <u>ດຳເນີນຊີວິດໃນຄວາມສັມພັນ</u>

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ( ເອຊາຢາ 1:໒-4,10-໒0 )

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຊີວິດມີຢູ່ ໒ ທາງເລືອກທີ່ໄປຄົນລະທາງທີ່ມີຜົນຕໍ່ການດຳເນີນຊີວິດຄືໃນການມີຄວາມສັມພັນອັນຖືກຕ້ອງຊອບທັມກັບພຣະເຈົ້າແລະອີກທາງນຶ່ງຄືການຕໍ່ສູ້ໃນອຳນາດຂອງຄວາມບາບ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຈະໄດ້ຊ່ວຍໃຫ້ທ່ານໄດ້ມີປະສົບການຢ່າງເຕັມປ່ຽມໃນການດຳເນີນຊີວິດທີ່ມີຄວາມສັມພັນທີ່ພຣະເຈົ້າຈະຊົງປະທານໃຫ້ໂດຍ:

* ມີການອະທິບາຍແມ່ນຫຍັງຄືການດຳເນີນຊີວິດທີ່ມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ.
* ການຍອມສາລະພາບທີ່ໄດ້ມີການຕໍ່ສູ້ທີ່ສະແດງອອກມາທີ່ເຮັດໃຫ້ມີຜົນເຈັບປວດໃນຄວາມສັມພັນກັບພຣະເຈົ້າ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
໒. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ສຶກສາ "<u>**ແຜນການສອນ**</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
໒. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ ໒-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ບົດນຳ:**

1. **ອະທິບາຍ:** ມະນຸດທຸກຄົນຢາກໄດ້ຮັບຜົນປໂຍດຫລາຍທີ່ສຸດໃນຊີວິດ. ພຣະເຈົ້າຈະບອກພວກເຮົາວ່າຈະໄດ້ຢ່າງໃດ ໂດຍຜ່ານທາງຜູ້ປະກາດພຣະທັມເອຊາຢາ.
໒. **ຄຳຖາມ:** ມີກົດເກນ ອັນໃດແດ່ທີ່ນັກຮຽນຕ້ອງເຮັດຕາມໃນອາທິດທີ່ຜ່ານມາ; **ຄຳຖາມ:** ການເຮັດຕາມກົດເກນ ເຫລົ່ານັ້ນໄດ້ເຮັດໃຫ້ທ່ານເປັນຄົນດີບໍ່? **ຖາມອີກວ່າ:** ການເຮັດຕາມກົດເກນທາງສາສນາເດ ເຮັດໃຫ້ທ່ານທີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າຫລືບໍ່? **ກ່າວຍ້ຳວ່າ:** ທ່ານເອຊາຢາຈະໃຫ້ຄຳຕອບແກ່ພວກເຮົາ.

### ມັນສຳຄັນຢູ່ບໍທີ່ຂ້ອຍມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ?

1. <u>ການຫລົງຫາຍເປັນບັນຫາຫຽັງ</u> ( ເອຊາຢາ 1:2-4 )

1) ຂໍໃຫ້ນັກຮຽນອາສາອ່ານພຣະທັມ ເອຊາຢາ 1:2-4

2) **ອະທິບາຍ:** ໃນການຟ້ອງ ຂອງຜູ້ພິພາກສາ ພຣະເຈົ້າໄດ້ສເນີຄະດີຂອງພຣະອົງເພື່ອຕໍ່ສູ້ກັບໄພ່ພົນຂອງພຣະອົງ. ທ້າຊວນໃຫ້ນັກຮຽນສລູບຄະດີດັ່ງກ່າວນີ້ ນຶ່ງປໂຍກ (ອີງຕາມຂໍ້ພຣະຄັມພີ)

3. ກ່າວເນັ້ນວ່າ ພວກອິສຣາເອນເປັນກະບົດຕໍ່ສູ້ພຣະເຈົ້າເຣື່ອງຄວາມສັມພັນ ເພາະວ່າພຣະເຈົ້າໄດ້ຊົງຮຽກເອີ້ນພວກເຮົາໃຫ້ມີຄວາມສັມພັນກັບພຣະອົງ. ທ້າຊວນນັກຮຽນ ໃຫ້ຄິດເຖິງສະພາບການໃນເວລານີ້ທີ່ສະແດງອອກໃຫ້ເຫັນວ່າມະນຸດໄດ້ປະຕິເສດພຣະເຈົ້າແລະທາງຂອງພຣະອົງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u> ເອຊາຢາ 1:2-4

1) ແມ່ນຄະດີຫຽັງທີ່ອົງພຣະຜູ້ເປັນເຈົ້າຟ້ອງໄພ່ພົນຂອງພຣະອົງ?

2) ເປັນຫຽັງພຣະເຈົ້າຈຶ່ງຊົງຮຽກເອີ້ນທັງສວັນແລະໂລກໃຫ້ຮັບຟັງຄະດີນີ້?

3) ເປັນຫຽັງພຣະເຈົ້າຈຶ່ງກ່າວເຖິງຄະດີນີ້ຕໍ່ພວກອິສຣາເອນກ່ຽວກັບຄວາມສັມພັນ?

4) ຂໍ້ພຣະຄັມພີທີ່ກຳລັງສຶກສາຢູ່ນີ້ ໄດ້ຕີຄວາມຫມາຍໃສ່ສະພາບຂອງໂລກເວລານີ້ຢ່າງໃດແດ່?

2. <u>ເປັນຫຍັງຂ້າພະເຈົ້າມະນັສການຈຶ່ງເປັນບັນຫາ</u> ເອຊາຢາ 1:10-15 )

1) ຂໍໃຫ້ນັກຮຽນອາສາອ່ານພຣະທັມເອຊາຢາ 1:10-15

2) ຊີ້ໃຫ້ນັກຮຽນເຫັນວ່າພຣະເຈົ້າໄດ້ກ່າວຫລາຍເທື່ອກ່ຽວກັບການມະນັສການຂອງໄພ່ພົນຂອງພຣະອົງ. **ກ່າວເນັ້ນ** ວ່າ...ພຣະເຈົ້າຊົງມີພຣະປະສົງຢາກມີຄວາມສັມພັນກັບມະນຸດທີ່ພຣະອົງຊົງສ້າງຂຶ້ນມາ. ໃຫ້ນັກຮຽນອະທິບາຍ ຄຳວ່າ "ມະນັສການ" ມີຄວາມຫມາຍແນວໃດ. **ອະທິບາຍ:** ຕາມຄວາມຮູ້ສຶກອັນບໍຣິສຸດການມະນັສການບໍ່ວ່າຈະເປັນກຸ່ມໃຫຍ່ຫລືສ່ວນຕົວ ແມ່ນການປາກົດຕົວຕໍ່ພຣະພັກ(ຕໍ່ຫນ້າ)ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່.

3) ທ້າຊວນນັກຮຽນ ໃຫ້ບັລຍາຍກ່ຽວກັບການມະນັສການຂອງພວກອິສຣາເອນ. **ຄຳຖາມ:** ມີຈັກຢ່າງແລະຢ່າງໃດແດ່ ທີ່ພຣະເຈົ້າຕອບສນອງຕໍ່ການມະນັນການຂອງເຂົາເຈົ້າ.

4) **ອະທິບາຍ:** ການມະນັສການຂອງພວກອິສຣາເອນອາດຈະບໍ່ຂາດຄວາມຫມາຍລົງໃນທັນທີທັນໃດ ອາດຈະຄ່ອຍໆ ຂາດຄວາມຫມາຍລົງເທື່ອລະນ້ອຍຈົນໃນທີ່ສຸດບໍ່ມີຄວາມຫມາຍຕໍ່ພຣະເຈົ້າເລີຍ. ຜູ້ທີ່ເຊື່ອໃນສມັຍນີ້ຕ້ອງລະວັງໃຫ້ດີເພື່ອໃຫ້ການມະນັສການພຣະເຈົ້າມີຄວາມຫມາຍແລະໃຫ້ໃຈສຸມໃສ່ພຣະເຈົ້າ. **ຄຳຖາມ:** ເປັນຫຽັງບັນດາຜູ້ທີ່ເຊື່ອຈຶ່ງເອົາໃຈສຸມໃສ່ວ່າຕົນເອງເປັນຄົນນັບຖືກສາສນາ ແທນທີ່ຈະເພິ່ງໃນຄວາມສັມພັນຂອງຕົນກັບພຣະເຈົ້າ?

5) **ບອກເລົ່າ:** ລາຍການມະນັນການຂອງໂບດເຊັ່ນ ດົນຕຣີ, ການອະທິຖານ, ການເທສນາ, ການຖວາຍຊັບ ແລະອື່ນໆ ໃຫ້ນັກຮຽນອອກຄຳຄິດເຫັນວ່າຈະເຮັດແນວໃດການມະນັສການຈຶ່ງຈະມີຄວາມຫມາຍຕໍ່ຜູ້ມະນັນການແລະເປັນທີ່ຊອບພຣະທັຍພຣະເຈົ້າ. ຫນູນໃຈນັກຮຽນໃຫ້ໃຊ້ພາກປະຕິບັດດັ່ງກ່າວໃນການມະນັສການແລະເຂົ້າເຝົ້າພຣະເຈົ້າປະຈຳວັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u> ເອຊາຢາ 1:10-15

1. ຂໍ້ພຣະຄຳເຫລົ່ານີ້ໄດ້ບອກແນວໃດວ່າພຣະເຈົ້າຊົງມີພຣະປະສົງອັນແຮງກ້າທີ່ຈະມີຄວາມສັມພັນສ່ວນຕົວກັບຜູ້ທີ່ພຣະອົງຊົງສ້າງ?
2. ເປັນຫຽັງຜູ້ປະກາດພຣະທັມຈຶ່ງປຽບທຽບອິສຣາເອນໃສ່ກັບເມືອງໂຊໂດມແລະເມືອງໂກໂມຣາ?
3. ອະທິບາຍການມະນັສການຂອງພວກອິສຣາເອນວ່າເປັນແນວໃດ?
4. ພຣະເຈົ້າຊົງຕອບສນອງຕໍ່ການມະສັມການຂອງໄພ່ພົນຂອງພຣະອົງແນວໃດ?
5. ທ່ານຈະມີບາດກ້າວອັນໃດເພື່ອຈະໃຫ້ການມະນັສການຂອງທ່ານເປັນທີ່ຖວາຍພຣະກຽດແດ່ພຣະເຈົ້າ?

**3. <u>ການດຳເນີນຊີວິດຂອງຂ້າພະເຈົ້າເປັນບັນຫາຢ່າງໃດ</u>** ( ເອຊາຢາ 1:16-20 )

1) ຂໍໃຫ້ນັກຮຽນອາສາອ່ານ ເອຊາຢາ 1:16-20

2) ຈົ່ງເຕືອນນັກຮຽນວ່າພຣະຄັມພີຂໍ້ນີ້ກ່າວເຖິງພວກອິສຣາເອນພ້ອມທັງຄຳແນະນຳກ່ຽວກັບການປົວແປງ ຄວາມສັມພັນໃຫມ່ກັບພຣະເຈົ້າ. ທ້າທາຍນັກຮຽນໃຫ້ຮູ້ຈັກເຖິງການກະທຳຕ່າງໆ ຂອງພຣະເຈົ້າ. **ອະທິບາຍ:** ການຖິ້ມໃຈເກົ່າເອົາໃຈໃຫມ່ແມ່ນຕ້ອງອ່ອຍຫນີຈາກບາບແລ້ວອ່ອຍຫນ້າຫາພຣະເຈົ້າ. ນຳພານັກຮຽນໃຫ້ ສງົບງຽບຢູ່ ຊຶ່ງເຂົາເຈົ້າອາດຈະຄິດເຫັນຄວາມບາບຂອງຕົນທີ່ຢາກຈະຮັບສາຣະພາບ. **ຄຳຖາມ:** ພຣະເຈົ້າຊົງ ສັນຍາຕໍ່ຜູ້ທີ່ສາຣະພາບບາບວ່າແນວໃດ?

3) ຈົ່ງຂຽນຖ້ອຍຄຳນີ້ໃສ່ກະດານ "**ການມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າຊ່ວຍພວກເຮົາໃຫ້ມີຄວາມ ສັມພັນອັນດີກັບເພື່ອນມະນຸດ**" ຖາມນັກຮຽນວ່າເຫັນດີນຳຖ້ອຍຄຳນີ້ຫລືບໍ່ເຫັນດີນຳ, ໃຊ້ຂໍ້ພຣະຄັມພີສນັບ ສນູນ ຖ້າຫາກເປັນໄປໄດ້ ( 1 ຢຮ 4:20).

4) ໃຫ້ນັກຮຽນຄິດຫາໂອກາດທີ່ອາດຈະເປັນໄປໄດ້ເພື່ອຈະແບ່ງປັນຄວາມຮັກຂອງພຣະເຈົ້າກັບຄົນໃນຄຸ້ມຂອງຕົນ. ຖ້າເປັນໄປໄດ້ໃຫ້ຈົດຊື່ຜູ້ທີ່ອາສາຈະອອກໄປຢ້ຽມຢາມ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>** ເອຊາຢາ 1:16-20

1. ພຣະເຈົ້າໄດ້ຊົງຮຽກເອີ້ນໃຫ້ໄພ່ພົນຂອງພຣະອົງເຮັດຫຍັງ?
2. ພຣະເຈົ້າຊົງສັນຍາວ່າແນວໃດ ຖ້າຫາກຄົນໃດຄົນນຶ່ງກັບໃຈໃຫມ່ແລະອ່ອຍໄປຫາພຣະເຈົ້າ?
3. ທ່ານຄິດວ່າເປັນຫຍັງຜູ້ປະກາດພຣະທັມຈຶ່ງໃຊ້ຄຳອຸປມາເປັນ ສີແດງ?
4. ໂບດຂອງທ່ານຈະສາມາດເຮັດຫຍັງແດ່ເພື່ອຊ່ອຍຄົນທີ່ຕ້ອງການຄວາມຊ່ອຍເຫລືອໃນຄຸ້ມຂອງທ່ານ?

**ສລູບ**

1. ເນັ້ນຫນັກວ່າ...ຖ້ອຍຄຳເຫລົ່ານີ້ໃນບົດຮຽນ ເອຊາຢາໄດ້ມາຈາກພຣະເຈົ້າ ຊຶ່ງເລີ້ມຈາກການຕັກເຕືອນຜູ້ນັບຖື ສາສນາທີ່ອ່ອຍຫນີຈາກການຮຽກເອີ້ນຂອງພຣະເຈົ້າວ່າໃຫ້ສາຣະພາບຄວາມບາບ.
2. ຂຽນໃສ່ກະດານ ຫລືອະທິບາຍວ່າ "**ຈົ່ງປ່ຽນຈາກການເປັນກະບົດແລະຖືພິທີກັມທາງສາສນາ ມາເປັນ ການກັບໃຈໃຫມ່ແລະປົວແປງຄວາມສັມພັນໃຫມ່ກັບພຣະເຈົ້າ**"
3. ພຣະຄຳແຫ່ງຄວາມຈິງໃນບົດຮຽນນີ້...
   = ການເປັນກະບົດຕໍ່ສູ້ພຣະເຈົ້າ ເປັນການຕັດຄວາມສັມພັນທາງດ້ານຈິດວິນຍານຢ່າງເລິກເຊິ່ງກັບພຣະເຈົ້າ
   = ພິທີນະມັສການແລະປະເພນີບໍ່ແມ່ນຄວາມຊົ່ວຮ້າຍ ແຕ່ວ່າ ຖ້າຊີວິດບໍ່ມີການປ່ຽນແປງໂດຍມີຄວາມສັມພັນ ກັບພຣະເຈົ້າຢ່າງຖືກຕ້ອງ ພິທີນະມັສການກໍບໍ່ມີຄວາມຫມາຍ. ພິທີກັມເປັນພຽງແຕ່ສັນຍາລັກເທົ່ານັ້ນ.
   = ການມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ ບໍ່ພຽງແຕ່ໄດ້ຮັບການຍົກໂທດບາບເທົ່ານັ້ນ. ການໄດ້ຮັບ ການຍົກໂທດບາບ ຈະຊ່ອຍໃຫ້ເຮົາຮຽນຮູ້ໃນການເຮັດດີເພື່ອສະແດງພຣະລັກສະນະຂອງພຣະເຈົ້າໃນ ຊີວິດເຮົາ.

5. ອະທິຖານປິດຫ້ອງຮຽນ

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ ( ແປແລະຮຽບໂດຍ J.H. )